ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ ເລກທີ 1266 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2023.

# ແຈ້ງການ

ຮຽນ: - ທ່ານ ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ ບັນດາກະຊວງ, ອົງການທຽບເທົ່າ;

- ທ່ານ ຫົວໜ້າຫ້ອງວ່າການ ນະຄອນຫຼວງ, ແຂວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ປັບປຸງກ່ຽວກັບການນຳໃຊ້ ສະກຸນເງິນໃນການປະມູນ ແລະ ສູດການດັດແກ້ລາຄາ ໃນເອກະສານປະມູນສະບັບເອກະພາບປີ 2021.

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 1481/ກຊລ, ລົງວັນທີ 06 ເມສາ 2023;
- ອີງຕາມ ຄຳເຫັນຊີ້ນຳທ່ານລັດຖະມົນຕີກະຊວງການເງິນ ຄັ້ງວັນທີ 24/04/2023.

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄຳແນະນຳການປັບປຸງເນື້ອໃນ ແລະ ນຳໃຊ້ເອກະສານປະມູນສະບັບເອກະພາບປີ 2021 ກ່ຽວກັບສະກຸນເງິນໃນການປະມູນ ແລະ ສູດດັດແກ້ລາຄາການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃຫ້ມີຄວາມເປັນເອກະພາບໄປໃນລວງດຽວກັນ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ. ສະນັ້ນ, ຈຶ່ງອອກແຈ້ງການໃຫ້ຈັດຕັ້ງປະຕິບັດດັ່ງນີ້:

1. ສຳລັບໂຄງການທີ່ໄດ້ຮັບເງິນກູ້ຢືມ, ຊ່ວຍເຫຼືອລ້າ ແລະ ຊ່ວຍເຫຼືອການພັດທະນາອື່ນໆ ສາມາດສະເໜີລາຄາປະມູນສະເໜີເປັນສະກຸນເງິນກີບ ຫຼື ຕ່າງປະເທດໄດ້, ຖ້າສະເໜີເປັນສະກຸນເງິນຕ່າງປະເທດ ເວລາຈ່າຍແມ່ນໃຫ້ຈ່າຍເປັນສະກຸນເງິນກີບ ໂດຍອີງໃສ່ອັດຕາແລກປ່ຽນຂອງທະນາຄານໃນວັນທີ່ອະນຸມັດຈ່າຍເງິນ ນັ້ນ;
2. ສຳລັບໂຄງການນຳໃຊ້ເງິນງົບປະມານພາຍໃນຮ້ອຍເປີເຊັນ ໃຫ້ສະເໜີລາຄາເປັນສະກຸນເງິນກີບ ແລະ ຈ່າຍເປັນສະກຸນເງິນກີບຕາມກົດໝາຍກຳນົດ;
3. **ສຳລັບສູດດັດແກ້ລາຄາປະມູນ ມີດັ່ງນີ້:**

   ເນື່ອງຈາກວ່າ: ດັດສະນີລາຄາຂອງ ເຫລັກ, ຊີມັງ, ນ້ຳມັນ, ແຮງງານ ແລະ ອື່ນໆ ບໍ່ສາມາດຊອກຫາໄດ້ຢູ່ບ້ານເຮົາ ຈຶ່ງຈຳເປັນຕ້ອງນຳໃຊ້ ດັດສະນີລາຄາຜູ້ບໍລິໂພກລວມ **(Consumer Price Index (CPI))** ເຊິ່ງອອກໂດຍທະນາຄານກາງໃນແຕ່ລະເດືອນ, ຈຶ່ງສະເໜີປ່ຽນເປັນສູດ ດັ່ງລຸ່ມນີ້:

   $P = A + B\ Imc/Ioc$. ໃນນີ້:**P** ແມ່ນຕົວດັດສະນີໃຊ້ສຳລັບການປັບ **A** ແລະ **B** ແມ່ນສຳປະສິດ ທີ່ລະບຸໄວ້ໃນ **PCC – GCC 45.1**, ເປັນຕົວແທນພາກສ່ວນທີ່ບໍ່ໃຫ້ດັດແກ້ ແລະ ໃຫ້ດັດແກ້ ຕາມລຳດັບຂອງມູນຄ່າສັນຍາ ແລະ **Imc** ແມ່ນດັດສະນີລາຄາຜູ້ບໍລິໂພກລວມ **(CPI)** ຂອງທ້າຍເດືອນທີ່ອອກເອກະສານຂໍເບີກຈ່າຍ ແລະ **Ioc** ແມ່ນດັດສະນີລາຄາຜູ້ບໍລິໂພກລວມທີ່ນຳໃຊ້ 28 ວັນ ກ່ອນການເປີດຊອງປະມູນ.

4. ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງເຜີຍແຜ່ແນະນຳ ແລະ ຜັນຂະຫຍາຍຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ສົມບູນ ອິນທະປັດຖາ